ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 08 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 JUL 2016

ສຳນັກງານ ຄຄຊ
ເລກທີ 0727
ວັນທີ 27 JUL 2016
ໂທລະສັບ 021-217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 06/2016 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I

## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວຂອງຄະນະຜູ້ວ່າການ

1. ທ່ານ ຜູ້ວ່າການ ທຫລ ໄດ້ເຂົ້າຮ່ວມກອງປະຊຸມລັດຖະບານກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ໄດ້ສະເໜີບົດສະຫຼຸບການຈັດຕັ້ງປະຕິບັດແຜນເງິນຕາ ຕົ້ນສົກປີ 2016 ແລະ ທ້າຍປີ 2016; ເຂົ້າຮ່ວມກອງປະຊຸມພົບປະຫາລື ກັບຄະນະກຳມາທິການແຜນການການເງິນ ແລະ ການກວດສອບ, ສະພາແຫ່ງຊາດ; ເຂົ້າຮ່ວມກອງປະຊຸມກ່ຽວກັບຄວາມຄືບໜ້າໃນການສ້າງທາງລົດໄຟລາວ-ຈີນ ທີ່ຫ້ອງວ່າການສຳນັກງານນາຍົກ; ປະຊຸມສອງຝ່າຍລະຫວ່າງ ທຫລ ກັບ ທະນາຄານແຫ່ງປະເທດໄທ (ທປທ); ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ເຂົ້າຮ່ວມກອງປະຊຸມ G20 ລະດັບຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການ ຄັ້ງທີ 3 ທີ່ປະເທດ ສປ. ຈີນ;
2. ຄະນະຜູ້ວ່າການ ທຫລ ເປັນປະທານຄະນະກະກຽມເນື້ອໃນກອງປະຊຸມ ເປີດກວ້າງຄະນະບໍລິຫານງານພັກ ທຫລ ຄັ້ງທີ IV ສະໄໝທີ 3; ເປັນປະທານກອງປະຊຸມ ຄະນະຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ບໍລິການທາງດ້ານການເງິນ; ເປັນປະທານກອງປະຊຸມຄະນະຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທຫລ; ເປັນປະທານກອງປະຊຸມວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຮ່ວມກັບບັນດາທູດຕານຸທູດທີ່ກ່ຽວຂ້ອງ; ໂອ້ລົມການປະກາດການຈັດຕັ້ງຂອງຫ້ອງການ, ກົມຈັດຕັ້ງ ແລະ ພະນັກງານ, ກົມບໍລິການ; ເຂົ້າຮ່ວມກອງປະຊຸມ ຄະນະຮ່າງດຳລັດວ່າດ້ວຍການປົກປ້ອງເງິນຝາກ; ເຂົ້າຮ່ວມປະຊຸມປັບປຸງດຳລັດວ່າດ້ວຍທຸລະກິດຊວດຈຳ; ເຂົ້າຮ່ວມກອງປະຊຸມຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ;
3. ຄະນະຜູ້ວ່າການ ທຫລ ຮັບແຂກເຂົ້າຢ້ຽມຂໍ່ານັບຈາກທ່ານ ທູດອັງກິດ D.Hugh Evant; ພົບປະກັບທ່ານທູດຍີ່ປຸ່ນ ປະຈຳລາວ; ຮັບແຂກເຂົ້າຢ້ຽມຂໍ່ານັບ ຫົວໜ້າຫ້ອງການ ຜູ້ຕາງໜ້າ IMF ປະຈຳຫວຽດນາມ ແລະ ສປປ ລາວ; ຮັບແຂກທະນາຄານລາວ-ຈີນ.

## III. ວຽກງານພົ້ນເດັ່ນ

1. ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ (ສກຈບ) ສຸກຮຸ່ງເຮືອງ ແລະ ສກຈບ ລາວໃໝ່; ສຳເລັດການມອບຮັບໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ໃຫ້ ສກຈບ ອຸດົມພັດທະນາ ແລະ ບໍລິສັດ ແວວຄຳ ເຊົ່າສິນເຊື່ອ;

2. ສຳເລັດການລົງກວດກາບັນດາທະນາຄານທຸລະກິດ ຈຳນວນ 2 ແຫ່ງ; ສຳເລັດການຕິດຕາມ ແລະ ອອກແຈ້ງເຕືອນ ການພິມເຜີຍແຜ່ຖານະການເງິນຂອງທະນາຄານທຸລະກິດທີ່ລະເບີຍ ປະຈຳປີ 2015 ແລະ ດຳເນີນມາດຕະການປັບໄໝທະນາຄານທຸລະກິດ 1 ແຫ່ງ ທີ່ຍັງບໍ່ສຳເລັດການພິມເຜີຍແຜ່ດັ່ງກ່າວ;

3. ສຳເລັດການປັບປຸງລະບົບຮັກສາຄວາມປອດໄພຂອງບັນດາຖານຂໍ້ມູນ (Server) ແລະ ລະບົບໂປຣແກຣມຕ່າງໆ ຂອງ ທຫລ;

4. ສຳເລັດການນຳເອົານິຕິກຳທີ່ຮັບຮອງແລ້ວ 2 ສະບັບ ລົງຈົດໝາຍເຫດທາງລັດຖະການ ປະກອບມີ: ❶ຄຳແນະນຳວ່າດ້ວຍການນຳໃຊ້ມາດຕະການຊົ່ວຄາວຕໍ່ຊັບສິນທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 08/ຄຕຟງ, ລົງວັນທີ 30/3/2016 ແລະ ❷ຂໍ້ຕົກລົງວ່າດ້ວຍ ມາດຕະການທາງບໍລິຫານ ຕໍ່ຜູ້ລະເມີດລະບຽບກົດໝາຍ ໃນຂົງເຂດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 09/ຄຕຟງ, ລົງວັນທີ 30/3/2016;

5. ໄດ້ຮັບເງິນປອມ ແລະ ອອກໃບຢັ້ງຢືນເງິນປອມ ທັງໝົດ ຈຳນວນ 8 ໃບ (ອອກໃຫ້: ທະນາຄານທຸລະກິດຈຳນວນ 6 ໃບ, ເມືອງໄຊທານີ ຈຳນວນ 1 ໃບ ແລະ ສະຖາບັນການທະນາຄານ ຈຳນວນ 1 ໃບ) ໃນນັ້ນ ມີປະເພດໃບ 100.000 ກີບ ຈຳນວນ 1 ໃບ, ປະເພດໃບ 50.000 ກີບ ຈຳນວນ 231 ໃບປະເພດໃບ 20.000 ກີບ ຈຳນວນ 1 ໃບ ແລະ ປະເພດໃບ 10.000 ເຢນ (JPY) ຈຳນວນ 1 ໃບ;

6. ໃນເດືອນ 6/2016 ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈຳນວນ 26 ສະບັບ. ຮອດປັດຈຸບັນຍອດ STR ລວມທັງໝົດ ມີຈຳນວນ 371 ສະບັບ;

7. ສຳເລັດກອງປະຊຸມກັບບັນດາທູຕານຸທູດ ເພື່ອລາຍງານກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານ ການຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ເພື່ອຂໍການສະໜັບສະໜູນ ສປປ ລາວ ໃນການເຂົ້າຮ່ວມກອງປະຊຸມຄົບຄະນະບໍລິຫານງານຂອງ ອົງການຕ້ານການຟອກເງິນສາກົນ (FATF Plenary); ສຳເລັດກອງປະຊຸມປຶກສາຫາລືກ່ຽວກັບ ການກຳນົດຈຸດຢືນຂອງ ທຫລ ໃນການເຈລະຈາເປີດເສລີດ້ານການບໍລິການ ຂະແໜງການເງິນ-ທະນາຄານ ກັບຄູ່ຮ່ວມເຈລະຈາໃນຕໍ່ໜ້າ.

## IV. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

ໃນເດືອນ 06/2016 ທະນາຄານໂລກ (WB) ໄດ້ປັບຕົວເລກຄາດຄະເນສະພາບເສດຖະກິດໂລກຈະຂະຫຍາຍຕົວຢູ່ໃນລະດັບ 2,4% ໃນປີນີ້ ຊຶ່ງຫຼຸດລົງ 0,5% ຈາກທີ່ຄາດການໄວ້ ເນື່ອງຈາກເສດຖະກິດໂລກກຳລັງປະເຊີນກັບຄວາມສ່ຽງໃນໄລຍະທີ່ເສດຖະກິດກຳລັງທົດຖອຍ ຊຶ່ງເຫັນໄດ້ຈາກ GDP ໃນໄຕມາດ 1/2016 ຂອງບັນດາປະເທດເສດຖະກິດໃຫຍ່ ຫຼຸດລົງ ເຊັ່ນ: ສ. ອາເມລິກາ, ສປ ຈີນ ແລະ ຍີ່ປຸ່ນ ລວມໄປເຖິງກຸ່ມປະເທດທີ່ກຳລັງພັດທະນາ ກໍມີແນວໂນ້ມຂະຫຍາຍຕົວຕໍ່າກວ່າປີຜ່ານມາ. ໂດຍລວມເຫັນໄດ້ວ່າ ການຄ້າ ແລະ ການລົງທຶນ ມີແນວໂນ້ມຂະຫຍາຍຕົວຊ້າລົງ. ລວມໄປເຖິງພາວະການຊື້-ຂາຍໃນຕະຫຼາດການເງິນ ທີ່ມີການປ່ຽນແປງໄປຢ່າງໄວວາ, ການທົດຖອຍທີ່ເກີດຂຶ້ນໃນກຸ່ມປະເທດທີ່ພັດທະນາແລ້ວ ແລະ ຄວາມບໍ່ແນ່ນອນທາງດ້ານການເມືອງ ແລະ ນະໂຍບາຍທີ່ນຳມາບັງຄັບໃຊ້ຂອງແຕ່ລະປະເທດໃນປັດຈຸບັນ;

ສະພາບອັດຕາແລກປ່ຽນສາກົນ ເຫັນວ່າ ເງິນໂດລາສະຫະລັດແຂງຄ່າ 1,21% ທຽບເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ພາຍຫຼັງຕົວເລກເສດຖະກິດຂອງ ສ. ອາເມລິກາ ໃນເດືອນ 5/2016 ອອກມາດີ ເປັນຕົ້ນ

ແມ່ນດັດຊະນີພາກອຸດສະຫະກຳໂຮງງານ (USD ISM Manufacturing) ປະຈຳເດືອນ 5/2016 ເພີ່ມຂຶ້ນເປັນ 51,3 ຈາກ 50,08 ໃນເດືອນຜ່ານມາ. ນອກນີ້, ຈຳນວນຜູ້ຂໍສະຫວັດດີການວ່າງງານ ປະຈຳອາທິດທີ 21/5/2016 ຫຼຸດລົງ ຈາກ 278.000 ມາເປັນ 268.000 ຄົນ ບວກກັບອັດຕາການວ່າງງານ ຫຼຸດລົງເປັນ 4,7% ຈາກ 5.0% ໃນເດືອນຜ່ານມາ;

ລາຄານ້ຳມັນສະເລ່ຍໃນຕະຫຼາດໂລກ ເພີ່ມຂຶ້ນ 10,54% ເປັນ 50,34 ໂດລາສະຫະລັດ/ບາເຣວ ສາເຫດຍ້ອນນັກລົງທຶນເປັນຫ່ວງຕໍ່ສະຖານະການການຜະລິດນ້ຳມັນດິບຂອງປະເທດໄນຈີເລຍ ຫຼັງຈາກການປະກາດຕົວເລກການຜະລິດນ້ຳມັນດິບ ຫຼຸດລົງເຖິງ 170.000 ບາເຣວຕໍ່ວັນ ເນື່ອງຈາກການໂຈມຕີທໍ່ນ້ຳມັນພາຍໃນປະເທດ. ສ່ວນລາຄາຄຳສະເລ່ຍໃນຕະຫຼາດສາກົນ ຫຼຸດລົງ 1,48% ເປັນ 1.243,03 ໂດລາສະຫະລັດ/ອອນ.

2. <u>ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ</u>

ທຫລ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາ ໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດດັ່ງລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 06/2016 (ຕົວເລກຄາດຄະເນ) ຢູ່ໃນລະດັບ 1,50% ເພີ່ມຂຶ້ນ 0,90% ຈາກ 0,60% ໃນເດືອນ 05/2016;
- ຖານເງິນຕາປະຈຳເດືອນ 06/2016 (ຮອດວັນທີ 10/06/2016 ) ເພີ່ມຂຶ້ນ 1.933,07 ຕື້ກີບ ຫຼື 6,57% ທຽບໃສ່ເດືອນ 05/2016 (12/5/2016 ), ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2.416,59 ຕື້ກີບ ຫຼື 8,37%. ສາເຫດຕົ້ນຕໍຍ້ອນ ທຫລ ລ່ວງໜ້າເພື່ອດຸ່ນດ່ຽງງົບປະມານ ຈຳນວນ 1.000 ຕື້ກີບ (ບ້ວງ 1.000 ຕື້ກີບ) ແລະ ທທກ ຮັບເງິນໂອນຈາກຕ່າງປະເທດ ສຸດທິ 225 ລ້ານໂດລາສະຫະລັດ, ເຖິງແມ່ນວ່າ ທທກ ຖອນເງິນສົດອອກນຳໃຊ້ 40,19 ລ້ານໂດລາສະຫະລັດ ກໍຕາມ. ປະລິມານເງິນ $M_2$ ຫຼຸດລົງ 91,81 ຕື້ກີບ ຫຼື 0,14% ທຽບໃສ່ເດືອນ 05/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 6.772,85 ຕື້ກີບ ຫຼື 11,90%;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 6/2016 ທຽບເດືອນ 5/2016 ເໜັງຕີງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,02% ທຽບເງິນໂດລາສະຫະລັດ ແລະ ແຂງຄ່າ 0,83% ທຽບເງິນບາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບອັດຕາຕະຫຼາດຢູ່ໃນລະດັບເກົ່າສຳລັບເງິນກີບທຽບໂດລາສະຫະລັດ ຄື: 0,28% ແຕ່ ສຳລັບກີບທຽບບາດ ແມ່ນຫຍັບອອກຈາກກັນຈາກ 0,02% ເປັນ 0,38%. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,66% ທຽບກັບເງິນໂດລາສະຫະລັດ ແຕ່ອ່ອນຄ່າ 0,87% ທຽບເງິນບາດ;
- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ປະຈຳເດືອນ ແຕ່ວັນທີ (13/05-10/06/2016) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 51,52% ເນື່ອງຈາກປະລິມານຄວາມຕ້ອງການ ແລະ ການສະໜອງເງິນຕາຕ່າງປະເທດ ຫຼຸດລົງ. ຄວາມຕ້ອງການຫຼາຍກວ່າການສະໜອງ ເຫັນໄດ້ຈາກ ທທກ ຂາຍສຸດທິ 20,50 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍເງິນບາດສຸດທິ 10.291,84 ລ້ານບາດ ຫຼື 294,06 ລ້ານໂດລາສະຫະລັດທຽບເທົ່າ, ແຕ່ຊື້ໂດລາສຸດທິ 273,56 ລ້ານໂດລາສະຫະລັດ. ທຫລ ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 82,25 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍໂດລາສຸດທິ 76,43 ລ້ານໂດລາສະຫະລັດ ແລະ ຂາຍບາດສຸດທິ 204 ລ້ານບາດ ຫຼື 5,83 ລ້ານໂດລາສະຫະລັດທຽບເທົ່າ;
- ດຸນການຊຳລະກັບຕ່າງປະເທດຜ່ານ ITRS ປະຈຳເດືອນ 06 (13/05-10/06/2016) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 8,46 ລ້ານໂດລາສະຫະລັດ, ໃນນັ້ນ ກະແສເງິນໄຫຼອອກ ມີ 575,27 ລ້ານໂດລາສະຫະລັດ ຊຶ່ງມາຈາກການຊຳລະເງິນກູ້ຢືມຂອງພາກລັດຖະບານ ຈຳນວນ 70,29 ລ້ານໂດລາສະຫະລັດ ແລະ ທະນາຄານທຸລະກິດ ຈຳນວນ 233,37 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼເຂົ້າ ມີ 566,82 ລ້ານໂດລາສະຫະລັດ ຊຶ່ງມາຈາກເງິນກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດ ຈຳນວນ 282,4 ລ້ານໂດລາສະຫະລັດ.

3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດວັນທີ 10/06/2016 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 55.029,76 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,25%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 0,93% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 50,81% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດຫຼຸດລົງ 0,43% ຊຶ່ງກວມເອົາ 49,19% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດວັນທີ 10/06/2016 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 52.148,94 ຕື້ກີບ ເພີ່ມຂຶ້ນ 2,26% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 47,01% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 52,99% ຂອງສິນເຊື່ອທັງໝົດ;

ໃນເດືອນ 06/2016 ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 2 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 14,16%. ເກັບຕົ້ນທຶນໄດ້ 35,55 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 06/2016 ມີຈຳນວນ 2.523,55 ຕື້ກີບ. ໃນນີ້, ສິນເຊື່ອຢູ່ເມືອງເປົ້າໝາຍ 1.616,61 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 218,59 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 251,06 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 437,30 ຕື້ກີບ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 05/2016 ມີຈຳນວນ 2.235,03 ຕື້ກີບ ຫຼຸດລົງ 2,30% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 3,46% ຂອງຍອດເຫຼືອສິນເຊື່ອທັງໝົດ.

4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 4.004 ສະບັບ ເພີ່ມຂຶ້ນ 3,89% ເປັນເງິນຈຳນວນ 2.164,39 ຕື້ກີບ ຫຼຸດລົງ 28,97% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 136 ຄັ້ງ ເພີ່ມຂຶ້ນ 12,39% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 655,90 ຕື້ກີບ ເພີ່ມຂຶ້ນ 16,11% ເມື່ອທຽບໃສ່ເດືອນຜ່ານມາ;

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 24/05/2016-25/06/2016 ມີການເຄື່ອນໄຫວຈຳນວນ 9.679 ຄັ້ງ ລາຍລະອຽດມີ ດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 9.646 ຄັ້ງ ມີມູນຄ່າການໂອນ 2.712,19 ຕື້ກີບ ເພີ່ມຂຶ້ນ 3,15% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 2.511 ຄັ້ງ. ໃນນັ້ນມີທະນາຄານທີ່ເຮັດທຸລະກຳທັງໝົດ 38 ທະນາຄານ, ຕະຫຼາດຫຼັກຊັບລາວ ແລະ Bconnex;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 31 ຄັ້ງ ມີມູນຄ່າການໂອນ 324,60 ຕື້ກີບ ຫຼຸດລົງ 12,06% ເມື່ອທຽບໃສ່ເດືອນຜ່ານມາ;
- **ສະກຸນເງິນໂດລາ:** ມີການເຄື່ອນໄຫວ ຈຳນວນ 1 ຄັ້ງ ມີມູນຄ່າ 2 ລ້ານໂດລາສະຫະລັດ;
- **ສະກຸນເງິນບາດ**: ມີການເຄື່ອນໄຫວ ຈຳນວນ 1 ຄັ້ງ ມີມູນຄ່າ 50 ລ້ານບາດ.

4.2 ການຊື້-ຂາຍພັນທະບັດ

ພາຍໃນເດືອນ 06/2016 ພັນທະບັດກະຊວງການເງິນບ້ວງສະສົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄ້ຳປະກັນ) ມີການຈຳໜ່າຍ ຈຳນວນ 500 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 3 ບ້ວງ ຊຶ່ງມີຍອດເຫຼືອ 6.485,80 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນຈາກທະນາຄານທຸລະກິດ ໂດຍກົງ ຈຳນວນ 554 ຕື້

[1] ເດືອນ 06/2016 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງເກັບກຳຂໍ້ມູນໄດ້ບໍ່ຄົບຖ້ວນ.

ກີບ ແລະ 90 ລ້ານໂດລາສະຫະລັດ, ບ້ວງລ້າງໜີ້ 3.536,80 ຕື້ກີບ, ບ້ວງລະດົມທຶນຈາກທະນາຄານທຸລະກິດ ປະມູນຜ່ານທະນາຄານແຫ່ງ ສປປ ລາວ ຈຳນວນ 2.395 ຕື້ກີບ) ;

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 06/2016 ມີການຈຳໜ່າຍ ແລະ ໄຖ່ຖອນພັນທະບັດທຫລ ໃຫ້ທະນາຄານທຸລະກິດ ຈຳນວນ 54 ລ້ານໂດລາສະຫະລັດ. ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈຳນວນ 354 ລ້ານໂດລາສະຫະລັດ.

5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.127,40 ຈຸດ ຫຼຸດລົງ 1,34% ເມື່ອທຽບໃສ່ເດືອນຜ່ານມາ ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 463.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,17 ຕື້ກີບ ຫຼຸດລົງ 54,36% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 60,43% ຂອງມູນຄ່າການຊື້-ຂາຍທັງໝົດ. (ໝາຍເຫດ: ປັບປຸງປະລິມານຊື້-ຂາຍຮຸ້ນເດືອນຜ່ານມາ ມີ 961.200 ຮຸ້ນ ບໍ່ແມ່ນ 961.200 ລ້ານຮຸ້ນ) ;
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.003 ກີບ/ຮຸ້ນ ເພີ່ມຂຶ້ນ 415 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 69.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 349,22 ລ້ານກີບ ຫຼຸດລົງ 76,89% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 23,54% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31%[2];
- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.643 ກີບ/ຮຸ້ນ ຫຼຸດລົງ 84 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 255.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,44 ຕື້ກີບ ຫຼຸດລົງ 50,42% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 59,54% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3];
- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.000 ກີບ/ຮຸ້ນ ເພີ່ມຂຶ້ນ 400 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 0,70 ລ້ານກີບ ຫຼຸດລົງ 73,48% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4];
- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.601 ກີບ/ຮຸ້ນ ຫຼຸດລົງ 32 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 98.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 255,39 ລ້ານກີບ ຫຼຸດລົງ 14,52% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 45,51% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5];
- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.116 ກີບ/ຮຸ້ນ ຫຼຸດລົງ 284 ກີບ/ຮຸ້ນ ມີປະລິມານການຊື້-ຂາຍທັງໝົດ 39.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 122,76 ລ້ານກີບ. ໂດຍເປັນ

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

ການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຮຸ້ນ SVN ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 4,22%[6].

## ພາກທີ II
## ທິດທາງແຜນການໃນຕໍ່ໜ້າ

### I. ວຽກງານການເມືອງແນວຄິດ

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ;
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນຳໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນຳໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- ສືບຕໍ່ການຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມຂອງທະນາຄານ ລາວຈີນ ຈຳກັດ ສາຂາບໍ່ເຕັນ ແຂວງຫຼວງນໍ້າທາ;
- ສືບຕໍ່ຕິດຕາມ ແລະ ຊຸກຍູ້ທະນາຄານທຸລະກິດ 5 ແຫ່ງ ທີ່ຍັງບໍ່ທັນສາມາດເພີ່ມເງິນທຶນຈົດທະບຽນຕໍ່າສຸດ ໃຫ້ຄົບຕາມລະບຽບກົດໝາຍທີ່ ທຫລ ໄດ້ກຳນົດອອກ;
- ກະກຽມລົງກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ປະຈຳປີ 2015, ຕິດຕາມການແກ້ໄຂຂໍ້ຄົງຄ້າງຂອງທະນາຄານທຸລະກິດ 4 ແຫ່ງ;

---

[6] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ກະກຽມລຶບລ້າງໃບອະນຸຍາດດຳເນີນທຸລະກິດຊົ່ວຄາວຂອງ ສກຈບ ວິງວານໄຊ ພ້ອມທັງແຈ້ງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອລຶບລ້າງໃບທະບຽນວິສາຫະກິດ;
- ຕິດຕາມການກະກຽມມອບ-ຮັບໃບອະນຸຍາດດຳເນີນທຸລະກິດຖາວອນ ຂອງ ບໍລິສັດ ໂຕໂຍຕາ ທູໂຊ ລາວ ເຊົ່າສິນເຊື່ອ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ດອກຄູນ;
- ຕິດຕາມການສະເໜີຂໍໃບອະນຸຍາດດຳເນີນທຸລະກິດຖາວອນຂອງ ໂຮງຊວດຈຳ ຄຳປະສິງ;
- ຕິດຕາມການປະກອບ ແລະ ປັບປຸງເອກະສານສະເໜີຂໍອະນຸຍາດດຳເນີນທຸລະກິດເພີ່ມເຕີມ ຂອງ ສກຈບ ເຮັສ ພີຊີ;
- ສືບຕໍ່ຕິດຕາມການປະກອບເອກະສານເພີ່ມເຕີມ ຕາມມະຕິກອງປະຊຸມຜ່ານບົດຄົ້ນຄວ້າການສະເໜີຂໍອະນຸຍາດດຳເນີນທຸລະກິດ ເພື່ອລາຍງານ ຄະນະຜູ້ວ່າການ ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ຂອງບໍລິສັດ ອາຊຽນ ເຊົ່າສິນເຊື່ອ;
- ຄົ້ນຄວ້າລົງເລິກເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ແລະ ສືບຕໍ່ເຮັດວຽກກັບບໍລິສັດ ເອີນແອນຢັງ ລາວ ຈຳກັດ (EY) ໃນການສ້າງແຜນຈັດຕັ້ງປະຕິບັດ ຫຼັກການບາເຊວ 2;
- ຕິດຕາມການພິຈາລະນາຂໍອະນຸມັດລາຍເຊັນຈາກທ່ານ ຜູ້ວ່າການ ທີ່ຮ່າງເຖິງທ່ານລັດຖະມົນຕີ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຮັບຮອງລາຍເຊັນ ແລະ ປະກາດໃຊ້ ດຳລັດວ່າດ້ວຍໂຮງຊວດຈຳ;
- ສືບຕໍ່ປັບປຸງຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ;
- ກະກຽມສະເໜີກະຊວງຍຸຕິທຳກວດກາຄວາມສອດຄ່ອງດ້ານກົດໝາຍ ກ່ຽວກັບຮ່າງດຳລັດວ່າດ້ວຍການປົກປ້ອງເງິນຝາກ;
- ສືບຕໍ່ຮ່າງຂໍ້ຕົກລົງວ່າດ້ວຍ ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ, ຂໍ້ຕົກລົງວ່າດ້ວຍ ການບັນຊີ ແລະ ການກວດສອບ ກ່ຽວກັບວຽກງານຫຼັກຊັບ, ຮ່າງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງ ແລະ ການນຳໃຊ້ເງິນຄັງສຳຮອງຂອງສຳນັກງານ ຄຄຊ;
- ກະກຽມຄວາມພ້ອມໃນການເຮັດວຽກງານ ແລະ ຈັດກອງປະຊຸມຮ່ວມກັບ ອົງການປະຕິບັດກົດໝາຍ ແລະ ຊ່ຽວຊານຈາກ UNODC ເພື່ອຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບວຽກງານຕ້ານການຟອກເງິນ;
- ສືບຕໍ່ຊຸກຍູ້ ແລະ ສະໜັບສະໜູນທະນາຄານທຸລະກິດ ທີ່ເປັນສະມາຊິກຂອງໂຄງການ LAPS ໃຫ້ສາມາດທົດສອບທຸລະກຳທາງການເງິນໃຫ້ສຳເລັດ;
- ສືບຕໍ່ຮ່າງແຜນການ ແລະ ອອກແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍມາດຕະການທາງບໍລິຫານ ຕໍ່ຜູ້ລະເມີດລະບຽບກົດໝາຍ ໃນຂົງເຂດວຽກງານຕ້ານ, ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງບັນດາທະນາຄານທຸລະກິດ;
- ສືບຕໍ່ລາຍງານທຸລະກຳທີ່ມີລັກສະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບ